# ພາກທີ I ຄວາມຮູ້ທົ່ວໄປກ່ຽວກັບການຄ້າມະນຸດ

ການຄ້າມະນຸດ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນໄດ້ກຳນົດໄວ້ໃນ ມາດຕາ 2 ແລະ ມາດຕາ 37 ຂອງກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ (ປີ 2015).

**1. ນິຍາມການຄ້າມະນຸດ**

ການຄ້າມະນຸດ ແມ່ນການຊອກຫາ, ລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນດ້ວຍການຂົ່ມຂູ່, ແນະນຳ, ຕົວະຍົວະຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ການເອົາເດັກມາລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ການໃຫ້ຖືພາ, ຂໍທານ ແລະ ການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ດ້ວຍຮູບການອື່ນ ເພື່ອຂູດຮີດແຮງງານ, ຂູດຮີດທາງ ເພດ, ເປັນຂ້າທາດ, ຄ້າໂສເພນີ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆ ຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

ຜູ້ຖືກເຄາະຮ້າຍ ແມ່ນບຸກຄົນ ທີ່ໄດ້ຮັບຄວາມເສຍຫາຍໂດຍກົງທາງດ້ານສຸຂະພາບ, ຊີວິດ, ຈິດໃຈ, ກຽດສັກສີ, ເສລີພາບ ຫຼື ຊັບສິນຈາກການຄ້າມະນຸດ.

**2.ອົງປະກອບຂອງການຄ້າມະນຸດ**

ນິຍາມການຄ້າມະນຸດໄດ້ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ຊຶ່ງມີອົງປະກອບຕົ້ນຕໍ ຕາມມາດຕາ 9, 10, 11 ແລະ 12 ຂອງກົດໝາຍສະບັບດັ່ງກ່າວ ດັ່ງລາຍລະອຽດລຸ່ມນີ້:

1. ການກະທຳ;
2. ວິທີການ;
3. ຈຸດປະສົງ.

ສຳລັບການກະທຳຜິດຕໍ່ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ພຽງແຕ່ມີການກະທຳ ແລະ ຈຸດປະສົງ ເທົ່ານັ້ນ ກໍຖືວ່າເປັນການຄ້າມະນຸດ ເຖິງວ່າຈະມີການຍິນຍອມ ຫຼື ມີຄວາມສະໝັກໃຈກໍຕາມ.

**2.1 ການກະທຳ (ມາດຕາ 10 )**

ການກະທຳ ແມ່ນການຊອກຫາ, ການລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ຫຼື ການກະທຳອື່ນ ທີ່ພົວພັນເຖິງການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ.

**2.2 ວິທີການ (ມາດຕາ 11 )**

ວິທີການ ແມ່ນ ການຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ເອົາເດັກມາລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ໃຫ້ຖືພາ, ຂໍທານ ແລະ ຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ແລະ ວິທີການອື່ນ.

**2.3 ຈຸດປະສົງ (ມາດຕາ 12 )**

ຈຸດປະສົງ ແມ່ນເພື່ອຂູດຮີດແຮງງານ, ຂູດຮີດທາງເພດ, ເອົາເປັນຂ້າທາດ, ຄ້າໂສເພນີ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ຈຸດປະສົງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ.

ການຍິນຍອມ ຂອງຜູ້ຖືກເຄາະຮ້າຍດ້ວຍຄວາມສະໝັກໃຈ ຫຼື ບໍ່ສະໝັກໃຈກໍ່ຕາມ ຖ້າຫາກວ່າມີການນຳໃຊ້ວິທີການໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນຂໍ້ 2.2 ຂ້າງເທິງກໍ່ຖືວ່າເປັນການຄ້າມະນຸດ.

## ພາກທີ II ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

### ກ. ນິຍາມຜູ້ຖືກເຄາະຮ້າຍ

ຜູ້ຖືກເຄາະຮ້າຍ ໝາຍເຖິງ ຜູ້ໄດ້ຮັບຄວາມເສຍຫາຍໂດຍກົງທາງດ້ານສຸຂະພາບ, ຊີວິດ, ຈິດໃຈ, ກຽດສັກສີ, ເສລີພາບ ຫຼື ຊັບສິນ ຈາກທຸກຮູບການຂອງການຄ້າມະນຸດ ຊຶ່ງໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ.

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດປະກອບມີ 3 ປະເພດດັ່ງນີ້:

1. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ ແລະ ຖືກເຄາະຮ້າຍ ຢູ່ ສປປ ລາວ;
2. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ ແຕ່ໄປຖືກເຄາະຮ້າຍຢູ່ຕ່າງປະເທດ;
3. ຄົນຢູ່ຕ່າງປະເທດ ແຕ່ມາຖືກເຄາະຮ້າຍ ຢູ່ ສປປ ລາວ.

### ຂ. ສິດຂອງຜູ້ຖືກເຄາະຮ້າຍ

ສິດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ຊຶ່ງປະກອບມີ:

1. ຂໍຄວາມຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
2. ແຈ້ງຄວາມຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ;
3. ໃຫ້ການກ່ຽວກັບຄະດີ;
4. ສະເໜີຂໍ້ມູນຫຼັກຖານ;
5. ຍື່ນຄຳຮ້ອງຂໍ;
6. ໄດ້ຮັບການທົດແທນຄ່າເສຍຫາຍ;
7. ບໍ່ຖືກດຳເນີນຄະດີອາຍາ ແລະ ບໍ່ຖືກກັກຂັງໃນສະຖານເປັນໂສເພນີ, ເຂົ້າ-ອອກ ເມືອງຜິດກົດໝາຍ;
8. ໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອ ເພື່ອຮັບປະກັນຄວາມປອດໄພຂອງຕົນ;
9. ບໍ່ຖືກຖ່າຍຮູບ, ບັນທຶກພາບ ເພື່ອເຜີຍແຜ່ ຊຶ່ງຈະພາໃຫ້ເສຍກຽດສັກສີ ແລະ ຊື່ສຽງ;
10. ໄດ້ຮັບການຊ່ວຍເຫຼືອດ້ານບ່ອນພັກເຊົາ, ກົດໝາຍ, ການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ເສດຖະກິດ, ການກັບຄືນສູ່ຄອບຄົວ ແລະ ສັງຄົມ;
11. ເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫຼື ຈົດກ່າຍເອົາເນື້ອໃນທີ່ຈຳເປັນອອກຈາກສຳນວນຄະດີ ຫຼັງຈາກສິ້ນສຸດການສືບສວນ-ສອບສວນ;
12. ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ;
13. ສະເໜີຄ້ານຕົວຜູ້ດຳເນີນຄະດີອາຍາ;

14. ຮ້ອງຟ້ອງ, ຂໍອຸທອນ, ຂໍລຶບລ້າງ ພຶດຕິກໍາ ຫຼື ຄໍາສັ່ງຂອງເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ຫຼື ປະທານສານປະຊາຊົນ, ຜູ້ພິພາກສາ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;

15. ເອົາຜູ້ແປພາສາ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;

16. ໄດ້ຮັບສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຫາກໄດ້ເສຍຊີວິດ ຍາດພີ່ນ້ອງໃກ້ຊິດຂອງຜູ້ກ່ຽວຈະເປັນຜູ້ໃຊ້ສິດແທນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ.

**ຄ. ຫຼັກການພື້ນຖານໃນການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

ການກໍານົດຕົວຜູ້ຖືກເຄາະຮ້າຍ ຕ້ອງດໍາເນີນໃຫ້ສອດຄ່ອງກັບ ລັດຖະທໍາມະນູນ, ກົດໝາຍ, ລະບຽບການ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຊຶ່ງລວມມີບັນດາຫຼັກການຕົ້ນຕໍ ດັ່ງນີ້:

**1. ຫຼັກການມະນຸດສະທໍາ**

ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງຖືເອົາສິດຄວາມເປັນມະນຸດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເປັນໃຈກາງໃນການກໍານົດຕົວ, ຕ້ອງມີຈັນຍາບັນ, ຈັນຍາທໍາ ແລະ ການກໍານົດຕົວຕ້ອງດໍາເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ທັນການ.

**2. ຫຼັກການໄດ້ຂໍ້ມູນດ້ວຍຄວາມສະໝັກໃຈ**

ການດໍາເນີນການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງມີການເຂົ້າຮ່ວມດ້ວຍຄວາມສະໝັກໃຈຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍທີ່ຜູ້ຖືກເຄາະຮ້າຍຮັບຮູ້ຢ່າງລະອຽດກ່ຽວກັບສິດຜົນປະໂຫຍດທີ່ຈະໄດ້ຮັບ; ຂັ້ນຕອນການສໍາພາດ ແມ່ນອາດຈະໃຊ້ເວລາຍາວ, ມີຄວາມສະຫຼັບຊັບຊ້ອນ, ມີຄວາມສ່ຽງ, ມີສິ່ງກ່ຽວຂ້ອງຕ່າງໆ ຊຶ່ງອາດຈະມີການປ່ຽນແປງ ຫຼື ເພີ່ມເຕີມຕາມໄລຍະເວລາຂອງການສໍາພາດ.

**3. ຫຼັກການຮັກສາຄວາມລັບ**

ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຖືກເຄາະຮ້າຍ, ເຈົ້າໜ້າທີ່ ທີ່ດໍາເນີນການສໍາພາດໃນການກໍານົດຕົວຜູ້ຖືກເຄາະຮ້າຍ ຕ້ອງຮັກສາຄວາມລັບ, ບໍ່ເປີດເຜີຍສະຖານະພາບຂອງຜູ້ຖືກເຄາະຮ້າຍ ເພາະການໃຫ້ຂໍ້ມູນຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ເຂົ້າຮ່ວມ ແມ່ນມີຄວາມສໍາຄັນຫຼາຍ ຖ້າບໍ່ສາມາດຮັກສາຄວາມລັບໄດ້ ຜູ້ຖືກເຄາະຮ້າຍອາດຕົກຢູ່ໃນໄພອັນຕະລາຍ.

**4. ຫຼັກການບໍ່ຈໍາແນກຜູ້ຖືກເຄາະຮ້າຍ**

ຜູ້ຖືກເຄາະຮ້າຍທຸກຄົນ ມີສິດເທົ່າທຽມກັນໃນການໄດ້ຮັບການປົກປ້ອງຈາກພາກສ່ວນທີ່ກ່ຽວຂ້ອງ ບົນພື້ນຖານກົດໝາຍພາຍໃນ ແລະ ສາກົນ ໂດຍບໍ່ຈໍາແນກສະຖານະພາບທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ສັນຊາດ, ເຊື້ອຊາດ, ສາສະໜາ, ພາສາ, ເພດ, ໄວ ແລະ ອື່ນໆ.

**5. ຫຼັກການສຳລັບຜູ້ດຳເນີນການສຳພາດ ແລະ ພາສາທີ່ໃຊ້ໃນການສຳພາດ**

- ຜູ້ດຳເນີນການສຳພາດຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບການແນະນຳ ແລະ ຝຶກອົບຮົມກ່ຽວກັບ ການກຳນົດຕົວຜູ້ຖືກເຄາະຮ້າຍ;

- ຜູ້ດຳເນີນການສຳພາດ ຕ້ອງໄດ້ປຶກສາຫາລືກັນກ່ຽວກັບປະເດັນການສຳພາດ, ຄຳສັບດ້ານວິຊາການ, ການໃຊ້ພາສາ, ອຸປະກອນຮັບໃຊ້ ແລະ ສະຖານທີ່ ທີ່ເໝາະສົມສຳລັບການສຳພາດ;

- ການສຳພາດທຸກຄັ້ງຕ້ອງໃຊ້ພາສາລາວ ໃນກໍລະນີຜູ້ຖືກເຄາະຮ້າຍບໍ່ຮູ້ພາສາລາວ ຜູ້ກ່ຽວມີສິດໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານການແປພາສາ.

**6. ຫຼັກການຄຳນຶງເຖິງສິດຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ**

ໃນການສຳພາດຜູ້ຖືກເຄາະຮ້າຍ ຕ້ອງຖືເອົາສິດຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ ໂດຍອີງຕາມສິດຂອງຜູ້ຖືກເຄາະຮ້າຍ.

**7. ຫຼັກການປະສານສົມທົບ**

ຫຼັກການນີ້ ເປັນຫຼັກການທີ່ກຳນົດໃຫ້ເຈົ້າໜ້າທີ່ ທີ່ມີສິດໜ້າທີ່ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ຕ້ອງໄດ້ປະສານສົມທົບ ແລະ ຮ່ວມມືກັບພາກສ່ວນອື່ນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ.

**ງ. ສາເຫດທີ່ພາໃຫ້ມີການກຳນົດຕົວຜູ້ຖືກເຄາະຮ້າຍ**

- ມີການແຈ້ງຄວາມ ຫຼື ຄຳຮ້ອງຟ້ອງ ຈາກບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆ ກ່ຽວກັບບຸກຄົນທີ່ສົງໃສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
- ເຈົ້າໜ້າທີ່ພົບເຫັນໂດຍກົງ ບຸກຄົນທີ່ສົງໃສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ຜ່ານການລົງກວດຄົ້ນກ່ຽວກັບຄະດີອື່ນ;
- ບຸກຄົນໃດໜຶ່ງໄດ້ເອົາຕົວຫຼົບໜີຈາກເຄືອຂ່າຍຄ້າມະນຸດ ຫຼື ສະຖານທີ່ຖືກຂູດຮີດ ແລະ ໄປຂໍຄວາມຊ່ວຍເຫຼືອຈາກພົນລະເມືອງ ຫຼື ເຈົ້າໜ້າທີ່.

**ຈ. ພາກສ່ວນທີ່ມີຄວາມຮັບຜິດຊອບໃນການກຳນົດຕົວຜູ້ຖືກເຄາະຮ້າຍເບື້ອງຕົ້ນ.**

- ອົງການປົກຄອງບ້ານ;
- ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ, (ປກສ ກຸ່ມບ້ານ);
- ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ;
- ທະຫານຊາຍແດນ;
- ອົງການຈັດຕັ້ງມະຫາຊົນ;
- ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ;
- ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ.

ສຳລັບໜ້າທີ່ຂອງແຕ່ລະພາກສ່ວນແມ່ນໄດ້ກຳນົດໄວ້ໃນຂໍ້ (4.1 ແລະ 4.2)

**ສ. ຂັ້ນຕອນຂອງການກຳນົດຕົວຜູ້ຖືກເຄາະຮ້າຍ**

ຂັ້ນຕອນຂອງການກຳນົດຕົວຜູ້ຖືກເຄາະຮ້າຍ ປະກອບມີ 4 ຂັ້ນຕອນດັ່ງນີ້:

- ການປະເມີນກ່ອນການສໍາພາດ;
- ການກະກຽມກ່ອນການສໍາພາດ;
- ການດໍາເນີນການສໍາພາດເພື່ອເກັບກໍາຂໍ້ມູນ;
- ການສັງລວມຂໍ້ມູນຂອງການສໍາພາດ.

**1. ການປະເມີນກ່ອນການສໍາພາດ**

ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດອາດຈະສະແດງອອກ ໃນຂໍ້ມູນເບື້ອງຕົ້ນດັ່ງລຸ່ມນີ້:

• **ອາຍຸ** : ທຸກໆໄວອາຍຸແມ່ນສາມາດຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແຕ່ໂດຍທົ່ວໄປເດັກທີ່ມີອາຍຸຕໍ່າກວ່າ 18 ປີ ແມ່ນກຸ່ມທີ່ມີຄວາມສ່ຽງສູງທີ່ຈະຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ສ່ວນກຸ່ມຄົນທີ່ມີອາຍຸສູງ ຈະມີຄວາມສ່ຽງໜ້ອຍກວ່າ.

- ການຄ້າມະນຸດ ເພື່ອຂູດຮີດແຮງງານ ສ່ວນຫຼາຍຈະສຸມໃສ່ຜູ້ມີອາຍຸຕໍ່າກວ່າ 40 ປີ;
- ການຄ້າມະນຸດເພື່ອຂູດຮີດທາງເພດ ສ່ວນຫຼາຍແມ່ນເດັກ ແລະ ແມ່ຍິງທີ່ອາຍຸຕໍ່າກວ່າ 22 ປີ.

• **ເພດ** : ເພດຍິງ ເປັນກຸ່ມທີ່ມີຄວາມສ່ຽງສູງ ທີ່ຈະຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຂູດຮີດທາງເພດ.

ສ່ວນເພດຊາຍ ຈະເປັນກຸ່ມທີ່ມີຄວາມສ່ຽງສູງ ທີ່ຈະຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຂູດຮີດແຮງງານ.

• **ສັນຊາດ** : ບໍ່ມີສິ່ງໃດ ຫຼື ອັນໃດທີ່ຢັ້ງຢືນກ່ຽວກັບສັນຊາດຂອງຜູ້ກ່ຽວ;

• **ພາສາ** : ຜູ້ຖືກເຄາະຮ້າຍ ບໍ່ສາມາດສື່ສານພາສາລາວໄດ້, ພາສາທ້ອງຖິ່ນ ຫຼື ສື່ສານພາສາອື່ນ;

• **ເອກະສານ** : ຕ້ອງສັງເກດວ່າ ເອກະສານເດີນທາງ, ບັດປະຈໍາຕົວ, ສໍາມະໂນຄົວ, ໃບພັກເຊົາຊົ່ວຄາວ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ ກັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຖືກຕ້ອງ ຫຼື ບໍ່?;

• **ການເຄື່ອນຍ້າຍ** : ພາຫະນະທີ່ນໍາໃຊ້ໃນການເດີນທາງ, ເສັ້ນທາງນໍາສົ່ງ-ຂົນສົ່ງ, ເດີນທາງໄປດ້ວຍຕົນເອງ ຫຼື ບຸກຄົນອື່ນພາໄປ ຫຼື ມີໃຜກະກຽມການເດີນທາງໃຫ້;

• **ສະຖານທີ່** : ທີ່ຢູ່ສຸດທ້າຍຂອງຜູ້ຖືກເຄາະຮ້າຍ ກ່ອນໄດ້ຮັບການຊ່ວຍເຫຼືອຈາກເຈົ້າໜ້າທີ່ ແມ່ນມີຄວາມສໍາຄັນ ເຊັ່ນ: ໂຮງຈັກ, ໂຮງງານ, ສະຖານທີ່ຂຸດຄົ້ນບໍ່ແຮ່, ກໍ່ສ້າງ, ຂາຍບໍລິການທາງເພດ, ເຮືອນພັກ, ໂຮງແຮມ, ເຮືອນຢູ່, ຮ້ານອາຫານ ຫຼື ສວນປູກຝັງ, ເຮືອປະມົງ ແລະ ອື່ນໆລ້ວນແຕ່ຊີ້ບອກເຖິງການຂູດຮີດ;

• **ພຶດຕິກໍາ**: ການກະທໍາ ຫຼື ອາການທີ່ສະແດງອອກ ຂອງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍເຊັ່ນ: ຫຼີກລ້ຽງການຕອບຄໍາຖາມ, ຊຶມເສົ້າ, ກະວົນກະວາຍ, ຢ້ານກົວ, ໃຈຮ້າຍ ແລະ ອື່ນໆ;

• **ຮ່ອງຮອຍຕາມຮ່າງກາຍ**: ທຸກຮ່ອງຮອຍບາດເຈັບທີ່ເຫັນໄດ້ຕາມຮ່າງກາຍ, ການຂາດສານອາຫານ ຫຼື ໄດ້ຮັບຜົນກະທົບດ້ານຈິດໃຈ;

ນອກຈາກຂໍ້ມູນເບື້ອງຕົ້ນທີ່ກ່າວມານີ້ແລ້ວ ຍັງມີຂໍ້ມູນອື່ນທີ່ໄດ້ຈາກການນໍາສົ່ງຜູ້ຖືກເຄາະຮ້າຍທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ການຢັ້ງຢືນຂອງແພດ, ຂໍ້ມູນການສໍາພາດ ແລະ ອື່ນໆ.

❖ **ສິ່ງທີ່ຄວນເອົາໃຈໃສ່:**

ແຕ່ລະຂໍ້ມູນເບື້ອງຕົ້ນຂ້າງເທິງ ສາມາດຕີຄວາມໝາຍໄດ້ຫຼາຍແບບ ແລະ ຕ້ອງສັງເກດຕີລາຄາພ້ອມກັນ, ຜູ້ສໍາພາດຕ້ອງໝູນໃຊ້ຂໍ້ມູນເບື້ອງຕົ້ນທີ່ໄດ້ຮັບໃຫ້ສອດຄ່ອງກັບເງື່ອນໄຂ ແລະ ເຫດການຕົວຈິງ ເພື່ອເຮັດໃຫ້ການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດດໍາເນີນໄປຢ່າງມີປະສິດທິຜົນສູງສຸດ.

**2. ການກະກຽມກ່ອນການສໍາພາດ**

ກ່ອນການສໍາພາດ ຕ້ອງໄດ້ກະກຽມບຸກຄະລາກອນທີ່ຈະເຂົ້າຮ່ວມການສໍາພາດ, ສະຖານທີ່ ແລະ ຜູ້ທີ່ຈະຖືກສໍາພາດ.

**2.1 ສະຖານທີ່ສໍາພາດ**

• ກໍລະນີມີຫ້ອງສໍາພາດ: ຫ້ອງສໍາພາດຄວນປະກອບດ້ວຍອຸປະກອນຕ່າງໆທີ່ຈໍາເປັນນໍາໃຊ້ເຂົ້າໃນການສໍາພາດ ເຊັ່ນ: ເຄື່ອງບັນທຶກສຽງ, ເຄື່ອງບັນທຶກພາບວິດີໂອ, ຕຸກກະຕາ, ເຄື່ອງຫຼິ້ນຕ່າງໆທີ່ເໝາະສົມກັບໄວອາຍຸຂອງຜູ້ຖືກສໍາພາດ ແລະ ອື່ນໆ;

• ກໍລະນີບໍ່ມີຫ້ອງສໍາພາດ: ໃຫ້ດໍາເນີນຢູ່ສະຖານທີ່ທີ່ເໝາະສົມ ໂດຍປາສະຈາກການລົບກວນ, ມີລັກສະນະເປັນສ່ວນຕົວ ແລະ ມີສະພາບແວດລ້ອມທີ່ເປັນມິດຕໍ່ຜູ້ຖືກສໍາພາດ.

**2.2 ບຸກຄະລາກອນທີ່ຈະສໍາພາດ**

• ເປັນຜູ້ທີ່ໄດ້ຮັບການແນະນໍາ ຫຼື ຜ່ານການຝຶກອົບຮົມກ່ຽວກັບເຕັກນິກການສໍາພາດ;

• ມີຄວາມຮູ້ດ້ານຈິດຕະວິທະຍາ, ມີຄວາມຮູ້ດ້ານກົດໝາຍ, ພັດທະນາການຂອງເດັກໃນແຕ່ລະໄວອາຍຸ, ຄວາມຮູ້ພື້ນຖານກ່ຽວກັບການຄ້າມະນຸດ ແລະ ປະສົບການຕໍ່ວຽກງານດັ່ງກ່າວ;

• ຮູ້ຄວບຄຸມອາລົມຂອງຕົນ ແລະ ບໍ່ເອົາອາລົມຂອງຕົນໄປປະທະ ຫຼື ມີອາລົມຮ່ວມກັບຜູ້ຖືກສໍາພາດ;

• ຮູ້ນໍາໃຊ້ວິທີການຕ່າງໆຄື: ການສັງເກດ, ຟັງ, ເວົ້າ, ສໍາພັດ, ນໍາໃຊ້ຄໍາຖາມ ແລະ ວິທີການອື່ນໆ;

• ບຸກຄະລາກອນທີ່ຈະເຂົ້າຮ່ວມການສໍາພາດ ຕ້ອງມີການປະຊຸມປຶກສາຫາລືເພື່ອວາງແຜນການສໍາພາດໃຫ້ລະອຽດ.

**2.3 ການນຸ່ງຖືໃນເວລາສໍາພາດ**

ແຕ່ງກາຍສຸພາບ, ສະອາດ, ບໍ່ໃສ່ເຄື່ອງແບບ, ບໍ່ຖືອາວຸດ ເພື່ອຫຼີກລ້ຽງຮູບການທີ່ເປັນການນາບຂູ່, ຂົ່ມຂູ່ຜູ້ຖືກເຄາະຮ້າຍ.

**2.4 ຜູ້ເຂົ້າຮ່ວມໃນການສໍາພາດ**

• ໃນການສໍາພາດ ຕ້ອງມີຜູ້ເຂົ້າຮ່ວມ 2 ຫຼື 3 ຄົນ ຊຶ່ງປະກອບດ້ວຍ ຜູ້ບັນທຶກ, ຜູ້ສໍາພາດ ແລະ ບຸກຄົນອື່ນໆທີ່ກ່ຽວຂ້ອງ;

- ຖ້າຜູ້ຖືກສໍາພາດເປັນເດັກ, ຫູໜວກ, ຕາບອດ, ປາກກືກ, ປັນຍາອ່ອນ, ເສຍຈິດ... ຊຶ່ງບໍ່ສາມາດປະຕິບັດສິດຂອງຕົນໄດ້ນັ້ນ ຕ້ອງໃຫ້ມີການເຂົ້າຮ່ວມຂອງ ພໍ່ແມ່, ຜູ້ປົກຄອງ, ຄູ, ຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ແລະ ໃຫ້ມີສະຖານທີ່ທີ່ເໝາະສົມ;
- ຜູ້ຖືກເຄາະຮ້າຍຫາກໄດ້ຮັບຜົນກະທົບທາງດ້ານຈິດໃຈຢ່າງຮ້າຍແຮງ ຕ້ອງມີນັກຈິດຕະວິທະຍາ ຫຼື ຜູ້ຊ່ຽວຊານເຂົ້າຮ່ວມ;
- ຕ້ອງມີຜູ້ແປພາສາ ໃນກໍລະນີຜູ້ຖືກເຄາະຮ້າຍເປັນຄົນຕ່າງປະເທດ ຫຼື ຊົນເຜົ່າ.

**2.5 ການກະກຽມຄວາມພ້ອມຜູ້ທີ່ຈະຖືກສໍາພາດ**

ກ່ອນຈະດໍາເນີນການສໍາພາດ ພາກສ່ວນທີ່ກ່ຽວຂ້ອງຕ້ອງພິຈາລະນາບັນຫາສໍາຄັນ ດັ່ງນີ້:

- ສັງເກດຄວາມພ້ອມດ້ານຮ່າງກາຍ ແລະ ຈິດໃຈຂອງຜູ້ຖືກເຄາະຮ້າຍ;
- ປະເມີນຄວາມສາມາດໃນການສື່ສານ ຫຼື ການໃຫ້ຂໍ້ມູນ;
- ປະເມີນຄວາມສະໝັກໃຈຂອງຜູ້ຖືກເຄາະຮ້າຍທີ່ຈະໃຫ້ການສໍາພາດ.

**2.6 ການກະກຽມກໍລະນີສຸກເສີນ**

ຜູ້ທີ່ຈະດໍາເນີນການສໍາພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງກຽມຄວາມພ້ອມຮັບສະຖານະການທີ່ອາດຈະເກີດຂຶ້ນ ໝາຍຄວາມວ່າ: ຕ້ອງປຶກສາຫາລືກັບຜູ້ເຮັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດຂັ້ນຕ່າງໆ ເພື່ອກຽມພ້ອມສໍາລັບກໍລະນີສຸກເສີນທີ່ອາດຈະເກີດຂຶ້ນໃນເວລາສໍາພາດໂດຍສະເພາະແມ່ນຜູ້ຖືກເຄາະຮ້າຍມີສຸຂະພາບອ່ອນເພຍ, ບໍ່ມີຄວາມພ້ອມ ຫຼື ບໍ່ໃຫ້ການຮ່ວມມື ຜູ້ສໍາພາດຕ້ອງມີການວາງແຜນຊອກວິທີແກ້ໄຂໃຫ້ເໝາະສົມ ຈົນກວ່າຜູ້ຖືກສໍາພາດພ້ອມໃຫ້ການຮ່ວມມື;

ຫາກໃນຂະນະທີ່ກໍາລັງສໍາພາດ ຜູ້ຖືກເຄາະຮ້າຍມີອາການຜິດປົກກະຕິເຊັ່ນ: ເປັນລົມ, ວິນ ແລະ ອື່ນໆ ຊຶ່ງບໍ່ສາມາດຈະທໍາການສໍາພາດຕໍ່ໄປໄດ້ ຜູ້ສໍາພາດຕ້ອງຢຸດການສໍາພາດທັນທີ ແລະ ໃຫ້ການຊ່ວຍເຫຼືອຜູ້ກ່ຽວໂດຍດ່ວນ.

**3. ການດໍາເນີນການສໍາພາດເພື່ອເກັບກໍາຂໍ້ມູນ**

ກ່ອນເລີ່ມສໍາພາດຕ້ອງສ້າງຄວາມລຶ້ງເຄີຍ ກ່າວຕ້ອນຮັບອັນອົບອຸ່ນ, ເປັນມິດ ແລະ ສ້າງຄວາມເຊື່ອໝັ້ນແກ່ຜູ້ຖືກສໍາພາດ;

ຜູ້ສໍາພາດ ສະເໜີແນະນໍາຕົນເອງ ແລະ ຜູ້ເຂົ້າຮ່ວມ, ສະເໜີຈຸດປະສົງຂອງການສໍາພາດ, ແຈ້ງສິດຕ່າງໆ ໃຫ້ຜູ້ຖືກສໍາພາດເຂົ້າໃຈ, ເມື່ອຜູ້ຖືກສໍາພາດພ້ອມທີ່ຈະໃຫ້ຂໍ້ມູນກໍ່ສາມາດເລີ່ມຕົ້ນສໍາພາດເອົາເນື້ອໃນຢ່າງເປັນລະບົບ ລວມທັງເພື່ອຮັບປະກັນການດໍາເນີນການສໍາພາດໃຫ້ໄດ້ດີ ຜູ້ສໍາພາດຄວນຖາມກ່ຽວກັບການເຈັບເປັນ ວ່າເປັນແນວໃດ ຖ້າວ່າຜູ້ໃຫ້ການສໍາພາດບໍ່ສາມາດໃຫ້ການສໍາພາດໄດ້ກໍ່ໃຫ້ເລື່ອນການສໍາພາດອອກໄປ. ຖ້າໃນກໍລະນີສາມາດໃຫ້ການສາພາດໄດ້ ກໍ່ຕ້ອງຖາມເຖິງຜູ້ໃຫ້ສາພາດວ່າຕ້ອງການຫຍັງແດ່ເຊັ່ນ: ນໍ້າດື່ມ, ໄປຫ້ອງນໍ້າ ແລະ ອື່ນໆ.

**3.1 ເຕັກນິກການສຳພາດ**

- ມີວິທີການທີ່ນິ້ມນວນ ແລະ ເປັນມິດຕໍ່ຜູ້ຖືກເຄາະຮ້າຍ;
- ການສຳພາດນັ້ນ ຕ້ອງໃຊ້ຄຳຖາມທີ່ເຂົ້າໃຈງ່າຍ, ເໝາະສົມກັບອາຍຸ ແລະ ຄວາມສາມາດຂອງຜູ້ຖືກເຄາະຮ້າຍ ໃນການຈຳແນກຄວາມຖືກຄວາມຜິດ, ມີລັກສະນະເປັນກັນເອງ ໂດຍບໍ່ໃຫ້ເກີດຄວາມຢ້ານກົວ, ຫຼີກເວັ້ນ ຄຳຖາມແບບກົດດັນ, ແບບຊີ້ນຳ ຫຼື ຄຳຖາມປິດ, ຊັກຈູງ ແລະ ບໍ່ໃຫ້ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ຂົ່ມຂູ່, ທຸບຕີ, ທໍລະມານ ຫຼື ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
- ການສຳພາດແຕ່ລະຄັ້ງຕ້ອງໃຫ້ມີການພັກຜ່ອນ, ຖ້າເປັນເດັກຕ້ອງໃຊ້ເວລາລວມບໍ່ໃຫ້ເກີນ **ເກົ້າສິບ** ນາທີ, ຫາກເປັນເພດຍິງ ຄວນໃຫ້ເພດດຽວກັນເປັນຜູ້ສຳພາດ ຫຼື ໃຫ້ມີເພດຍິງເຂົ້າຮ່ວມນຳ.

**3.2 ເນື້ອໃນການສຳພາດ**

ເນື້ອໃນການສຳພາດປະກອບມີ 2 ຊຸດຄຳຖາມຄື:

❖ ຊຸດຄຳຖາມທີ 1 ແມ່ນຮັບໃຊ້ພາກສ່ວນທີ່ມີຄວາມຮັບຜິດຊອບ ດັ່ງລະບຸໄວ້ໃນຂໍ້ (ຈ) ຂອງຄູ່ມືສະບັບນີ້ເພື່ອໃຫ້ໄດ້ຂໍ້ມູນເບື້ອງຕົ້ນແລ້ວສົ່ງຕໍ່ໃຫ້ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ດຳເນີນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

❖ ຊຸດຄຳຖາມທີ 2 ແມ່ນຮັບໃຊ້ສະເພາະເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ເພື່ອຢັ້ງຢືນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**3.2.1 ເນື້ອໃນການສຳພາດທົ່ວໄປ ເພື່ອເກັບກຳຂໍ້ມູນເບື້ອງຕົ້ນ(ຊຸດຄຳຖາມທີ 1 )**

- **ເປັນຫຍັງຈຶ່ງອອກຈາກບ້ານໄປ ( ເຫດຜົນກ່ອນອອກຈາກບ້ານ )**

- ບໍ່ມີ ຄົນມາຊັກຊວນ ☐
- ມີຄົນຊັກຊວນ ☐
- ຊັກຊວນດ້ວຍໂທລະສັບ ☐
- ເຮັດວຽກຢູ່ພາຍໃນປະເທດ ☐
- ໄປເຮັດວຽກຢູ່ຕ່າງປະເທດ ☐
- ພໍ່ແມ່, ຜູ້ປົກຄອງ ຮັບຮູ້ ☐
- ພໍ່ແມ່, ຜູ້ປົກຄອງ ບໍ່ຮັບຮູ້ ☐
- ມີຄົນບອກວ່າມີວຽກໃຫ້ເຮັດ ☐
- ໄດ້ເງິນເດືອນຫຼາຍ ☐
- ຍ້ອນທຸກຍາກ ☐
- ຖືກເຂົາບັງຄັບນາບຂູ່ ☐
- ເປັນໜີ້ສິນ ☐
- ຢາກຫາເງິນມາຊ່ວຍຄອບຄົວ ແລະ ຕົນເອງ ☐

- ຢາກມີຊີວິດດີຂຶ້ນ ☐
- ພໍ່ແມ່, ຜູ້ປົກຄອງ ໄດ້ຮັບເງິນກ່ອນໄປ ☐
- ຕົນເອງໄດ້ຮັບເງິນກ່ອນໄປ ☐

- **ໄປແນວໃດ**

- ມີບຸກຄົນຮັບຜິດຊອບການເດີນທາງ ☐
- ມີບຸກຄົນແລ່ນເອກະສານໃຫ້ ☐
- ແລ່ນເອກະສານດ້ວຍຕົນເອງ ☐
- ຮັບຜິດຊອບຄ່າໃຊ້ຈ່າຍດ້ວຍຕົນເອງ ☐
- ພໍ່ແມ່, ຜູ້ປົກຄອງພາໄປເອງ ☐
- ໄປດ້ວຍຕົນເອງ ☐
- ໄປກັບຄົນທີ່ມາຊັກຊວນ ☐
- ຂີ່ລົດໄປ ☐
- ຂີ່ເຮືອໄປ ☐
- ຂີ່ຍົນໄປ ☐
- ຍ່າງໄປ ☐
- ໄປຜ່ານດ່ານ ☐
- ໄປບໍ່ຜ່ານດ່ານ ☐
- ໄປຄົນດຽວ ☐
- ໄປນຳກັນຫຼາຍຄົນ ☐
- ໄປນຳກັນມີທັງຍິງ-ຊາຍ ☐
- ມີແຕ່ຜູ້ຍິງໄປນຳກັນ ☐
- ມີແຕ່ຜູ້ຊາຍໄປນຳກັນ ☐
- ມີຄົນໄປສົ່ງ ☐
- ເອກະສານເດີນທາງຢູ່ນຳຄົນອື່ນ ☐
- ເອກະສານເດີນທາງຢູ່ນຳຕົນເອງ ☐
- ຈາກລາວ-ໄປຕ່າງປະເທດ ☐
- ເດີນທາງຕາມການຄວບຄຸມຂອງຜູ້ພາໄປ ☐
- ຖືກແຍກທາງກັນໄປໃນເວລາເດີນທາງ ☐

- **ເມື່ອໄປຮອດບ່ອນເຮັດວຽກ ຫຼື ບ່ອນພັກເຊົາ ເປັນແນວໃດ**

- ມີຄົນບອກວ່າເປັນໜີ້ ☐
- ມີຄົນບອກວ່າກັບບ້ານບໍ່ໄດ້ ☐
- ບໍ່ແມ່ນວຽກທີ່ຕົກລົງກັນຢູ່ບ້ານ ☐
- ບໍ່ສາມາດໄປໃສໄດ້ ☐
- ຖືກຢຶດເອກະສານຕ່າງໆ ☐
- ມີຜູ້ຄວບຄຸມໄວ້ໃນສະຖານທີ່ ☐
- ຖືກບັງຄັບໃຫ້ເຮັດວຽກຕ່າງໆ ☐
- ຖືກບັງຄັບໃຫ້ເສບສິ່ງເສບຕິດ ☐
- ອາຫານການກິນບໍ່ພຽງພໍ ☐
- ບ່ອນພັກເຊົາແອອັດ, ບໍ່ປອດໄພ ☐
- ຖືກທຳຮ້າຍຮ່າງກາຍ ☐
- ຖືກບັງຄັບໃຫ້ເຮັດວຽກ ☐
- ບັງຄັບໃຫ້ຂາຍບໍລິການທາງເພດ ☐
- ຖືກປ້ອຍດ່າເປັນປະຈຳ ☐
- ບໍ່ໄດ້ຄ່າຕອບແທນ ☐
- ໄດ້ຄ່າຕອບແທນໜ້ອຍ ☐
- ເຮັດວຽກໜັກ ☐
- ເຮັດວຽກເກີນເວລາ ☐
- ບໍ່ມີເວລາພັກຜ່ອນ ☐
- ບໍ່ໄດ້ຮັບການປິ່ນປົວເວລາເຈັບເປັນ ☐
- ບໍ່ສາມາດຕິດຕໍ່ຫາຜູ້ອື່ນ ☐
- ຖືກບັງຄັບໃຫ້ຍົກຍ້າຍໄປຫຼາຍບ່ອນ ☐

### 3.2.2 ເນື້ອໃນການສຳພາດ ສຳລັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ (ຊຸດຄຳຖາມທີ 2)

**► ການກະທຳ ແລະ ວິທີການ**

- ກະລຸນາເລົ່າເຫດການກ່ອນອອກຈາກບ້ານເປັນຄືແນວໃດ ?
- ກ່ອນອອກຈາກບ້ານ ມີໃຜມາເວົ້າກັບເຈົ້າແນວໃດ ? ມີຈັກຄົນ? ຊື່ຫຍັງ? ອາຍຸຈັກປີ? ອາຊີບ? ຢູ່ໃສ?......
- ເຈົ້າຮູ້ຈັກກັບບຸກຄົນດັ່ງກ່າວໄດ້ແນວໃດ ?
- ເຂົາໄດ້ບອກກັບເຈົ້າແນວໃດ ? ມີໃຜຮັບຮູ້ນຳແດ່ ?
- ມີວຽກຫຍັງໃຫ້ເຈົ້າເຮັດ ? ຢູ່ໃສ?
- ໄດ້ເງິນເດືອນຫຼາຍປານໃດ ?
- ໃຜຮັບຜິດຊອບການໃຊ້ຈ່າຍຕ່າງໆ ໃນການເດີນທາງ ?
- ໃຜຮັບຜິດຊອບກ່ຽວກັບການປະກອບເອກະສານຕ່າງໆ ?
- ໄປນຳກັນ ມີຈັກຄົນ? ມີໃຜແດ່ ? ຊື່ຫຍັງ? ອາຍຸຈັກປີ? ອາຊີບ? ຢູ່ໃສ?......
- ອອກເດີນທາງເວລາໃດ(ວ ດ ປ)? ໄປແນວໃດ? (ເຮືອ, ລົດ, ຍົນ, ຍ່າງ...), ຜ່ານດ່ານໃດ? ໃຊ້ເວລາເດີນທາງດົນປານໃດ?
- ເອກະສານຢູ່ນຳຄົນພາໄປ ຫຼື ຢູ່ນຳຕົນເອງ ?
- ມີຄົນມາຮັບ ຫຼື ເດີນທາງໄປຫາເຂົາ ?
- ໃນເວລາເດີນທາງຖືກແຍກ ຫຼື ຖືກສົ່ງຕໍ່ ໄປບ່ອນອື່ນ ແນວໃດ?

**► ສະຖານທີ່ເຮັດວຽກ ( ຈຸດປະສົງ )**

- ສະຖານທີ່ທຳອິດທີ່ໄປເຖິງເປັນແນວໃດ?
- ມີການແນະນຳກ່ຽວກັບວຽກງານແນວໃດ ?
- ເພິ່ນບອກວ່າເປັນໜີ້ເທົ່າໃດ ?
- ເອກະສານຂອງເຈົ້າຢູ່ນຳໃຜ?
- ສະຖານທີ່ເຮັດວຽກເປັນແນວໃດ ?
- ໄດ້ເຮັດວຽກຕາມທີ່ໄດ້ຕົກລົງກັນເບື້ອງຕົ້ນ ຫຼື ບໍ່ ?
- ມີບຸກຄົນບັງຄັບ, ຂົ່ມຂູ່, ຄວບຄຸມໃຫ້ເຮັດວຽກຄືແນວໃດ ? (ຕົນເອງ ແລະ ຄອບຄົວ)
- ເຮັດວຽກນຳກັນ ມີຈັກຄົນ ?
- ມື້ໜຶ່ງເຮັດວຽກຈັກຊົ່ວໂມງ ?
- ເຂົາເຈົ້າທຳຮ້າຍຮ່າງກາຍເຈົ້າແນວໃດ ?
- ສາມາດໄປ-ມາບ່ອນອື່ນໄດ້ ແນວໃດ? ຖືກຂັງ ຫຼື ບໍ່ ? ຢູ່ສະຖານທີ່ໃດ ?

- ຖ້າບໍ່ເຮັດວຽກຕາມຄໍາສັ່ງຈະເປັນແນວໃດ ?
- ການເຮັດວຽກຂອງເຈົ້າໄດ້ຮັບຄ່າຕອບແທນຄືແນວໃດ ?
- ເວລາເຈັບເປັນ ເຂົາເຈົ້າເບິ່ງແຍງແນວໃດ ?
- ເຈົ້າສາມາດຕິດຕໍ່ກັບບຸກຄົນອື່ນແນວໃດ ?
- ຊີວິດການເປັນຢູ່ເປັນແນວໃດ ? ( ກິນ, ຢູ່, ພັກເຊົາ )

**4. ການສັງລວມຂໍ້ມູນສໍາພາດ.**

ພາຍຫຼັງສໍາພາດສໍາເລັດແລ້ວ ຜູ້ສໍາພາດຕ້ອງມີການສົມທຽບຂໍ້ມູນທີ່ປະເມີນເບື້ອງຕົ້ນກັບຜົນຂອງການສໍາພາດ ແລະ ຂໍ້ມູນອື່ນທີ່ມີຢູ່.

ກໍລະນີຜູ້ຖືກສໍາພາດເປັນຜູ້ໃຫຍ່ ຕ້ອງອີງໃສ່ **ສາມ** ອົງປະກອບ ຂອງການຄ້າມະນຸດ ຄື: ການກະທໍາ, ວິທີການ ແລະ ຈຸດປະສົງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ.

ໃນກໍລະນີຜູ້ຖືກສໍາພາດເປັນເດັກອາຍຸຕໍ່າກວ່າ 18 ປີ ຖ້າຫາກມີການກະທໍາ ແລະ ຈຸດປະສົງ ກໍ່ຖືວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຖິງວ່າຈະບໍ່ມີວິທີການ ຫຼື ມີການຍິນຍອມ ຫຼື ສະໝັກໃຈກໍ່ຕາມ.

**4.1 ກໍລະນີສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.**

ອົງການປົກຄອງບ້ານ, ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ, ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ທະຫານຊາຍແດນ, ອົງການຈັດຕັ້ງມະຫາຊົນ, ແຮງງານ ແລະ ສະຫວັດດີການ-ສັງຄົມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງມີໜ້າທີ່ສໍາພາດ ແລະ ເກັບກໍາຂໍ້ມູນເບື້ອງຕົ້ນ ແລ້ວສົ່ງຂໍ້ມູນດັ່ງກ່າວ ໃຫ້ເຈົ້າໜ້າທີ່ຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ພິສູດຂໍ້ມູນດັ່ງກ່າວໃຫ້ລະອຽດຈະແຈ້ງ ແລະ ລົງຄໍາເຫັນເປັນລາຍລັກອັກສອນ ເພື່ອຢັ້ງຢືນວ່າ ເປັນ ຫຼື ບໍ່ເປັນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

- ຖ້າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງໄດ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຢ່າງຮີບດ່ວນ ເພື່ອໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ພ້ອມທັງດໍາເນີນຄະດີຕໍ່ຜູ້ກະທໍາຜິດຕາມຂັ້ນຕອນຂອງກົດໝາຍ.
- ຖ້າບໍ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນໃຫ້ປະຕິບັດຕາມຂັ້ນຕອນຂອງກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງໄດ້ກໍານົດໄວ້.

**4.2 ກໍລະນີສົງໄສວ່າບໍ່ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.**

ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງໄດ້ສົ່ງຂໍ້ມູນເບື້ອງຕົ້ນໃຫ້ແກ່ເຈົ້າໜ້າທີ່ຕໍາຫຼວດທີ່ກ່ຽວຂ້ອງເພື່ອກວດກາ ແລະ ປະຕິບັດຕາມກົດໝາຍ, ລະບຽບການ ຫຼື ນິຕິກໍາທີ່ໄດ້ກໍານົດໄວ້.

**ພາກທີ III. ການສົມທຽບ ຄວາມແຕກຕ່າງ ລະຫວ່າງການຄ້າມະນຸດ ກັບການກະທຳຜິດອື່ນ ຕາມກົດໝາຍພາຍໃນ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.**

ຄູ່ມືນີ້ ຍົກໃຫ້ເຫັນການສົມທຽບລະຫວ່າງການຄ້າມະນຸດ ກັບການກະທຳຜິດອື່ນ ຕາມກົດໝາຍພາຍໃນ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຊຶ່ງສະແດງອອກຕາມຕາຕະລາງ ດັ່ງນີ້:

| **ສະຖານການກະທຳຜິດ** | **ການກະທຳ** | **ວິທີການ** | **ຈຸດປະສົງ** |
|---|---|---|---|
| **ອົງປະກອບຂອງການຄ້າມະນຸດ (ມາດຕາ 10-12 ຂອງກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ )** | - ການຊອກຫາ.<br>- ການລັກພາຕົວ.<br>- ການໃຫ້ສະຖານທີ່ພັກເຊົາ ຫຼື ລີ້ຊ່ອນ.<br>- ການເຄື່ອນຍ້າຍ.<br>- ການຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ ຫຼື ການກະທຳອື່ນທີ່ພົວພັນເຖິງການຄ້າມະນຸດ. | - ການຂົນຂວາຍ<br>- ແນະນຳ<br>- ຕົວະຍົວະຫຼອກລວງ<br>- ຊື້ຈ້າງ, ຈອບອອຍ<br>- ຍຸຍົງ<br>- ສວຍໃຊ້ອຳນາດ<br>- ນາບຂູ່, ບັງຄັບ<br>- ຜູກມັດດ້ວຍໜີ້ສິນ<br>- ເອົາເດັກມາເປັນລູກລ້ຽງ<br>- ເອົາເດັກເປັນລູກລ້ຽງແອບແຝງ<br>- ໝັ້ນໝາຍແອບແຝງ<br>- ແຕ່ງດອງແອບແຝງ<br>- ໃຫ້ຖືພາ<br>- ໃຫ້ຂໍທານ<br>- ຖ່າຍຮູບພາບ, ໃຫ້ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ວິທີການອື່ນ | - ການຂູດຮີດແຮງງານ<br>- ຂູດຮີດທາງເພດ<br>- ຄ້າໂສເພນີ<br>- ບັງຄັບໃຫ້ເປັນໂສເພນີ<br>- ເອົາເປັນຂ້າທາດ<br>- ເອົາອະໄວຍະຕ່າງໆ ຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນເພື່ອຫາຜົນປະໂຫຍດ. |
| **ການເປັນໂສເພນີ (ມາດຕາ 131 ກົດໝາຍອາຍາ )** | - ແມ່ນການຂາຍປະເວນີຂອງຕົນເອງໃຫ້ຜູ້ອື່ນເສບສົມ.<br>- ມີອາຍຸ 18 ປີຂຶ້ນໄປ.<br>- **ບໍ່ມີຜູ້ຖືກເຄາະຮ້າຍ.** | ການຂາຍປະເວນີແມ່ນເກີດຂຶ້ນບົນພື້ນ ຖານແນວຄວາມຄິດຂອງຜູ້ເປັນໂສເພນີເອງ.<br>**- ມີຄວາມສະໝັກໃຈ** | ເພື່ອຈຸດປະສົງທາງດ້ານເສດຖະກິດ-ການເງິນ.<br>**- ບໍ່ມີການຂູດຮີດ** |
| **ການຄ້າໂສເພນີ ( ມາດຕາ 132 ກົດໝາຍອາຍາ )** | - ການໃຫ້ສະຖານທີ່ພັກເຊົາ.<br>- ການຕິດຕໍ່,ພົວພັນ, ຊອກຫາ, ແຕ່ບໍ່ໃຫ້ສະຖານທີ່ພັກເຊົາ.<br>- ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ ຫຼື ອື່ນໆ.<br>**- ບໍ່ມີຜູ້ຖືກເຄາະຮ້າຍ** | - ການອຳນວຍຄວາມສະດວກໃຫ້ແກ່ການບໍລິການທາງເພດ.<br>- ການຫາລາຍໄດ້ດ້ວຍຮູບການເອົາຄົນມາຂາຍປະເວນີ.<br>**- ມີຄວາມສະໝັກໃຈ** | - ເພື່ອຜົນປະໂຫຍດທາງດ້ານເສດຖະກິດ ດ້ວຍການຂາຍປະເວນີຂອງບຸກຄົນອື່ນ.<br>**- ບໍ່ມີການຂູດຮີດ** |

| | | | |
|---|---|---|---|
| **ການເຜີຍແຜ່ສິ່ງລາມົກ (ມາດຕາ 138 ກົດໝາຍອາຍາ )** | - ໄດ້ຜະລິດ<br>- ມີໄວ້ຄອບຄອງ<br>{ ໜັງສື, ຮູບ, ຟີມ ວີດີໂອ ແລະ ສິ່ງອື່ນໆ ທີ່ລາມົກ ຊຶ່ງຂັດກັບວັດທະນະທຳອັນດີງາມຂອງຊາດ | ຈຳໜ່າຍ, ເຜີຍແຜ່ຜ່ານສື່ຕ່າງໆ | - ເພື່ອຜົນປະໂຫຍດທາງດ້ານເສດຖະກິດ<br>- ເພື່ອສ້າງຄວາມເຊື່ອມເສຍທາງດ້ານຊື່ສຽງ,ກຽດສັກສີ, ຄວາມອັບ ອາຍທາງເພດ ແກ່ບຸກ ຄົນອື່ນ.<br>**- ບໍ່ມີການຂູດຮີດ** |
| ການແຕ່ງດອງທີ່ຖືກຕ້ອງ (ມາດຕາ 6, 6/1 ແລະ ໝວດທີ 2 ກົດໝາຍວ່າດ້ວຍຄອບຄົວ ) | - ມີອາຍຸ 18 ປີຂຶ້ນໄປ<br>- ມີຄວາມມັກຮັກ, ມີການຕົກລົງ ແລະ ຄວາມສະໝັກໃຈຂອງຄູ່ບ່າວສາວ. | - ການໝັ້ນໝາຍ<br>- ການສູ່ຂໍ<br>- ການຈົດທະບຽນແຕ່ງດອງ.<br>- ການແຕ່ງດອງ. | ເພື່ອສ້າງເປັນຄອບຄົວທີ່ຖືກ ຕ້ອງຕາມກົດໝາຍ ແນ່ໃສ່ຄຸ້ມຄອງ, ສ້າງສາ, ປົກປັກຮັກສາຄອບຄົວໃຫ້ມີຄວາມຜາສຸກ, ເປັນຈຸລັງທີ່ເຂັ້ມແຂງຂອງສັງຄົມ |
| ການແຕ່ງດອງແອບແຝງ ( ມາດຕາ 2 ການຄ້າມະນຸດ ) | **ບໍ່ມີຄວາມມັກຮັກ** | **ມີການຕົວະຍົວະຫຼອກລວງ** | **ເພື່ອຂູດຮີດ** |
| **ການເອົາເດັກມາເປັນລູກລ້ຽງ (ດຳລັດ ເລກທີ 194/ລບ ວ່າດ້ວຍການເອົາເດັກມາເປັນລູກລ້ຽງ )** | - ລູກລ້ຽງຕ້ອງແມ່ນເດັກທີ່ຍັງບໍ່ທັນຮອດກະສຽນອາຍຸ 18 ປີ.<br>- ພໍ່ລ້ຽງແມ່ລ້ຽງຕ້ອງແມ່ນບຸກຄົນທີ່ມີອາຍຸແຕ່ 18 ປີຂຶ້ນໄປໃນເວລາເຮັດຄຳຮ້ອງຂໍເອົາເດັກໄປເປັນລູກ ລ້ຽງ ແລະ ມີອາຍຸຫ່າງກັບເດັກທີ່ຂໍໄປເປັນລູກລ້ຽງນັ້ນຢ່າງໜ້ອຍ ສິບແປດປີ;<br>- ພໍ່ລ້ຽງ ຫລື ແມ່ ບໍ່ຖືກປົດສິດໃນການເປັນພໍ່ແມ່ ທັງມີເງື່ອນໄຂທາງດ້ານເສດຖະກິດທີ່ເໝາະສົມ.<br>- ຕ້ອງໃຫ້ມີການເຫັນດີເຫັນພ້ອມ ເປັນລາຍລັກອັກສອນຂອງຜົວເມັຍ ແລະ ພໍ່ແມ່ຂອງເດັກນັ້ນເສັຍກ່ອນ ເວັ້ນເສັຍແຕ່ພໍ່ ຫລື ແມ່ ຂອງເດັກຫາກໄດ້ຖືກປົດສິດໃນການເປັນພໍ່ແມ່ | - ຍື່ນຄຳຮ້ອງຕໍ່ນາຍບ້ານບ່ອນເດັກອາໄສຢູ່ເພື່ອພິຈາລະນາພາຍໃນກຳນົດບໍ່ໃຫ້ເກີນໜຶ່ງເດືອນ,ຖ້າເຫັນຄວນຈຶ່ງອອກຂໍ້ຕົກລົງກ່ຽວກັບການເປັນລູກລ້ຽງແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ | - ແນ່ໃສ່ຄຸ້ມຄອງປົກປັກຮັກສາ ສ້າງຄອບຄົວໃຫ້ມີຄວາມຜາສຸກ ໃຫ້ເປັນຈຸລັງທີ່ເຂັ້ມ ແຂງຂອງສັງຄົມ |

| | | | |
|---|---|---|---|
| | ຫລື ຮັບຮູ້ວ່າ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫລື ເປັນຜູ້ຫາຍສາບສູນ.<br>- ຖ້າວ່າເດັກນັ້ນຫາກຮອດອາຍຸສິບປີ ແລ້ວ ຕ້ອງໃຫ້ມີການເຫັນດີຂອງເດັກ ຕື່ມອີກ. | | |
| **ການຮ່ວມເພດກັບເດັກ ( ມາດຕາ 89 ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ)** | - ການຊອກຫາ.<br>- ການຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ.<br>- ເດັກຍິງ-ຊາຍມີອາຍຸແຕ່ 12 ຫາ 18 ປີ. | - ການຕົວະຍົວະຫຼອກຫຼວງ.<br>- ການຊື້ຈ້າງຈອບອອຍ ດ້ວຍການຈ່າຍຄ່າຕອບແທນ.<br>- ການຕອບສະໜອງຜົນປະໂຫຍດດ້ວຍຮູບການໃດໜຶ່ງ. | ເພື່ອຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ |
| **ການທຳຊຳເລົາເດັກ ( ມາດຕາ 129 ກົດໝາຍເດັກ )** | - ການຊອກຫາ<br>- ການມີເພດສຳພັນກັບເດັກຍິງ ຫຼື ເດັກຊາຍ<br>- ເດັກຍິງ-ຊາຍມີອາຍຸແຕ່ 12 ຫາ 15 ປີ. | ການມີເພດສຳພັນກັບເດັກຍິງ ຫຼື ເດັກຊາຍດ້ວຍຄວາມສະໝັກໃຈ. | ເພື່ອຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ |

## ການສົມທຽບລະຫວ່າງການຄ້າມະນຸດ ແລະ ການລັກລອບເອົາຄົນເຂົ້າ-ອອກເມືອງຜິດກົດໝາຍ

| | **ການຄ້າມະນຸດ (ຜູ້ໃຫຍ່)** | **ການຄ້າມະນຸດ (ເດັກ)** | **ການລັກລອບຄົນເຂົ້າ-ອອກເມືອງຜິດກົດໝາຍ** |
|---|---|---|---|
| ອາຍຸຜູ້ຖືກເຄາະຮ້າຍ | ສູງກວ່າ 18 ປີ | ຕ່ຳກວ່າ 18 ປີ | ບໍ່ຈຳແນກ |
| ການກະທຳ | ຕ້ອງມີການກະທຳໃດໜຶ່ງຕາມນິຍາມທີ່ລະບຸຂ້າງເທິງ | ຕ້ອງມີການກະທຳໃດໜຶ່ງຕາມນິຍາມທີ່ລະບຸຂ້າງເທິງ | ລັກລອບເອົາຄົນເຂົ້າ-ອອກຜິດກົດໝາຍ |
| ວິທີການ | ຕ້ອງມີວິທີການໃດໜຶ່ງຕາມນິຍາມທີ່ລະບຸຂ້າງເທິງຖືກນຳໃຊ້ | ບໍ່ຈຳເປັນ | ບໍ່ມີວິທີການ |
| ຈຸດປະສົງ | ເພື່ອຂູດຮີດ | ເພື່ອຂູດຮີດ | ບໍ່ມີການຂູດຮີດ |
| ຄວາມເຫັນດີເຫັນພ້ອມຂອງຜູ້ຖືກເຄາະຮ້າຍ | ບໍ່ຈຳເປັນ, ຖ້າວ່າມີວິທີການໃດໜຶ່ງຖືກນຳໃຊ້ | ບໍ່ຈຳເປັນ ແລະ ວິທີການບໍ່ຈຳເປັນວ່າຕ້ອງມີ | ຜູ້ຖືກລັກລອບເຂົ້າເມືອງເຫັນດີເຫັນພ້ອມນຳ |
| ລັກສະນະຂ້າມແດນ | ບໍ່ຈຳເປັນ | ບໍ່ຈຳເປັນ | ມີຄວາມຈຳເປັນ |